# ຂໍ້ຕົກລົງເລື້ອງການແຈ້ງບອກທາງອີເລັກໂຕຣນິກ

| ຊື່ກໍລະນີ | ເລກກໍລະນີ |
|---|---|
| ຊື່ພະນັກງານກໍາກັບການຊ່ວຍເຫຼືອປະຈໍາຄາວຕີ້ | ເລກພະນັກງານກໍາກັບການຊ່ວຍເຫຼືອ |

***ຖາມ:*** *ການແຈ້ງບອກທາງອີເລັກໂຕຣນິກແມ່ນຫຍັງ?* ***ຕອບ:*** *ການແຈ້ງບອກທາງອີເລັກໂຕຣນິກ, ຫຼື ການແຈ້ງບອກທາງອອນລາຍ ແມ່ນອີເມວແຈ້ງເຕືອນໃຫ້ທ່ານຮູ້ວ່າ ມີຈົດໝາຍທີ່ຈະຕ້ອງກວດກາເບິ່ງ ໃນບັນຊີອອນລາຍສ່ວນຕົວທີ່ປອດພັຍຂອງທ່ານ.*

- ຂ້າພະເຈົ້າຕົກລົງທີ່ຈະຮັບເອົາການໂຕ້ຕອບສື່ສານທັງໝົດຈາກພະແນກປະຊາສົງເຄາະປະຈໍາຄາວຕີ້ (CWD) ໂດຍຜ່ານທາງການແຈ້ງບອກທາງອີເລັກໂຕຣນິກ, ຍົກເວັ້ນແຈ້ງການຕ່າງໆ ທີ່ກ່ຽວຂ້ອງກັບການພິຈາລະນາຄະດີຂອງຣັຖ, ຊຶ່ງຈະສົ່ງໃຫ້ທ່ານທາງໄປສະນີຂອງສະຫະຣັຖ.

- ຂ້າພະເຈົ້າຕົກລົງທີ່ຈະອ່ານການແຈ້ງບອກທາງອີເລັກໂຕຣນິກທຸກອັນທີ່ສົ່ງໄປທີ່ບັນຊີອີເມວຂອງຂ້າພະເຈົ້າແລະກວດກາເບິ່ງເອກະສານຕ່າງໆ ຜ່ານທາງບັນຊີອອນລາຍສ່ວນຕົວທີ່ປອດພັຍຂອງຂ້າພະເຈົ້າ.

- ຂ້າພະເຈົ້າຕົກລົງທີ່ຈະກວດກາເບິ່ງບັນຊີອີເມວຂອງຂ້າພະເຈົ້າເປັນປະຈໍາ (ພວກເຮົາຂໍແນະນໍາໃຫ້ກວດເບິ່ງຢ່າງໜ້ອຍທຸກສາມມື້) ເພື່ອໃຫ້ແນ່ໃຈວ່າ ຂ້າພະເຈົ້າໄດ້ກວດເບິ່ງຈົດໝາຍທີ່ສໍາຄັນຕໍ່ເວລາຢ່າງເໝາະສົມ.

- ຂ້າພະເຈົ້າຕົກລົງທີ່ຈະແຈ້ງໃຫ້ທາງ CWD ຮູ້ສະເໝີ ຖ້າຫາກຂ້າພະເຈົ້າປ່ຽນທີ່ຢູ່ອີເມວ ໂດຍການຕື່ມຟອມຂໍ້ຕົກລົງເລື້ອງການແຈ້ງບອກທາງອີເລັກໂຕຣນິກ (Electronic Notification Agreement) ອັນໃໝ່ພາຍໃນສິບວັນນັບແຕ່ມີການປ່ຽນທີ່ຢູ່ອີເມວ.

- ຂ້າພະເຈົ້າເຂົ້າໃຈວ່າ ແຈ້ງການຕ່າງໆ ທີ່ສົ່ງໄປທີ່ບັນຊີອອນລາຍສ່ວນຕົວຂອງຂ້າພະເຈົ້ານັ້ນ ແມ່ນຖືວ່າຂ້າພະເຈົ້າໄດ້ຮັບເມື່ອອີເມວຂອງຂ້າພະເຈົ້າໄດ້ຮັບການແຈ້ງບອກທາງອີເລັກໂຕຣນິກ ເຖິງແມ່ນວ່າ ຂ້າພະເຈົ້າຈະບໍ່ໄດ້ອ່ານກໍຕາມ.

- ຂ້າພະເຈົ້າເຂົ້າໃຈວ່າ ທາງ CWD ຕ້ອງໃຫ້ສໍາເນົາຂອງເອກະສານໃດໆ ກໍຕາມທີ່ສົ່ງໄປທີ່ບັນຊີອອນລາຍສ່ວນຕົວຂອງຂ້າພະເຈົ້າ ຖ້າຫາກຂ້າພະເຈົ້າຮ້ອງຂໍເອົາ.

- ຂ້າພະເຈົ້າເຂົ້າໃຈວ່າ ທາງ CWD ຈະກັບຄືນໄປສົ່ງເອກະສານແຈ້ງການແບບເປັນເຈັ້ຽໃຫ້ຂ້າພະເຈົ້າ ຖ້າຫາກວ່າ ການແຈ້ງບອກທາງອີເລັກໂຕຣນິກທີ່ສົ່ງໄປທີ່ອີເມວຂອງຂ້າພະເຈົ້ານັ້ນແມ່ນບໍ່ສໍາເລັດ.

- ຂ້າພະເຈົ້າເຂົ້າໃຈວ່າ ຂ້າພະເຈົ້າສາມາດຢຸດເຊົາຮັບການແຈ້ງບອກທາງອີເລັກໂຕຣນິກຍາມໃດກໍໄດ້ ແລະກັບຄືນໄປຮັບແຈ້ງການທາງໄປສະນີຄືເກົ່າ. ຖ້າຫາກຂ້າພະເຈົ້າຕ້ອງການແນວນັ້ນ ຂ້າພະເຈົ້າກໍພຽງແຕ່ຕິດຕໍ່ທາງ CWD ຂອງຂ້າພະເຈົ້າທີ່ ____________________ ແລະແຈ້ງໃຫ້ເຂົາເຈົ້າຮູ້ວ່າ ຂ້າພະເຈົ້າຕ້ອງການກັບຄືນໄປໃຊ້ບໍລິການຮັບແຈ້ງການທາງໄປສະນີຄືເກົ່າ.

| ທີ່ຢູ່ອີເມວທີ່ຂ້າພະເຈົ້າຕ້ອງການນໍາໃຊ້ເພື່ອຮັບການແຈ້ງບອກທາງອີເລັກໂຕຣນິກ | |
|---|---|
| ທີ່ຢູ່ອີເມວເພີ່ມເຕີມທີ່ຂ້າພະເຈົ້າຕ້ອງການນໍາໃຊ້ເພື່ອຮັບການແຈ້ງບອກທາງອີເລັກໂຕຣນິກ | |
| ລາຍເຊັນ (ຫຼື ເຄື່ອງໝາຍ) ຂອງສະມາຊິກໃນຄົວເຮືອນທີ່ເປັນຜູ້ໃຫຍ່ ຫຼື ຕົວແທນທີ່ໄດ້ຮັບອະນຸຍາດ | ວັນທີເຊັນຊື່ |
| ລາຍເຊັນ (ຫຼື ເຄື່ອງໝາຍ) ຂອງຄູ່ສົມລົດ, ຄູ່ໃນຄົວເຮືອນທີ່ຂຶ້ນທະບຽນ, ຫຼື ພໍ່ແມ່ອື່ນໆ ຂອງເດັກທີ່ໄດ້ຮັບການຊ່ວຍເຫຼືອດ້ານເງິນສົດ | ວັນທີເຊັນຊື່ |